

# ພັນທະກິດຂອງ ອຈ ໂປໂລ ທີ່ເມືອງໂກຣິນໂທ


“ມື້ໜຶ່ງ ໂປໂລ ໄດ້
ເຫັນນິມິດ ແລະ ໃນ
ນິມິດນັ້ນອົງພຣະຜູ້
ເປັນເຈົ້າໄດ້ກ່າວແກ່
ເພິ່ນວ່າ, ຢ່າສູ່ຢ້ານຄົນ
ເຫລົ່ານີ້ ແຕ່ຈົ່ງກ່າວ
ແກ່ພວກເຂົາຕໍ່ໄປບໍ່
ຕ້ອງຢຸດ’ ”
(ກຈກ 18:9, 10)

ຫລັງຈາກຂຽນຈົດໝາຍເຖິງຊາວໂຣມັນແລ້ວ, ຈົດໝາຍເຖິງຊາວໂກຣິນໂທ ເປັນຈົດໝາຍທີ່ຍາວທີ່ສຸດ ທີ່ ອຈ ໂປໂລ ໄດ້ຂຽນ.

ຈົດໝາຍສອງສະບັບທີ່ເຫລືອຢູ່ຂຽນຂຶ້ນຫ່າງກັນບໍ່ເທົ່າໃດອາທິດເອງ, ໃນຈົດໝາຍເຫລົ່ານັ້ນ ພວກເຮົາພົບຄຳແນະນຳທີ່ເປັນປະໂຫຍດສຳລັບການແກ້ໄຂສະຖານະການທີ່ຍາກລຳບາກ ທີ່ເກີດຂຶ້ນຈາກຄວາມຂັດແຍ່ງລະຫວ່າງພີ່ນ້ອງໃນຄຣິດຕະຈັກ.

ເພື່ອໃຫ້ເຂົ້າໃຈເຖິງສາລະສຳຄັນຂອງຈົດໝາຍຢ່າງຖືກຕ້ອງ, ພວກເຮົາຕ້ອງຮູ້ເຖິງບໍຣິບົດຂອງຈົດໝາຍເຫລົ່ານັ້ນກ່ອນ





- ການຂຽນເອີ້ນ ຂອງ ອຈ ໂປໂລ
- ການເດີນທາງໄປເມືອງໂກຣິນໂທ
- ຕົວເມືອງໂກຣິນໂທ
- ຊາວໂກຣິນໂທ
- ຈົດໝາຍເຖິງຊາວໂກຣິນໂທ



# ການຊົງຮຽກເອີ້ນຂອງ ອຈ ໂປໂລ

"ໂປໂລ, ຜູ້ເປັນອັກຄະສາວົກ (ບໍ່ແມ່ນມະນຸດແຕ່ງຕັ້ງ ຫລື ມະນຸດເປັນຕົວແທນແຕ່ງຕັ້ງ ແຕ່ວ່າພຣະເຢຊູຄຣິດເຈົ້າ ແລະ ພຣະບິດາເຈົ້າຜູ້ຊົງບັນດານໃຫ້ພຣະອົງຄືນພຣະຊົນໄດ້ຊົງແຕ່ງຕັ້ງ)(ຄລຕ 1:1)

ນອກຈາກອັກຄະສາວົກທັງ 12 ຄົນທີ່ພຣະເຢຊູຊົງເລືອກແລ້ວ, ພຣະຄຳພີຍັງກ່າວເຖິງອັກຄະສາວົກຄົນອື່ນໆອີກເຊັ່ນ: ທ່ານມັດທາຍ (ກຈກ 1:26), ທ່ານ.ບານາບາ (ກຈກ 14:4), ທ່ານ ຢາໂກໂບ ແລະ ອຈ ໂປໂລ (1 ກຣທ 15:7-9).

| | |
|---|---|
| ອຈ.ໂປໂລ ກາຍມາເປັນອັກຄະສາວົກໄດ້ແນວໃດ? | ໂດຍການເລືອກຂອງພຣະເຢຊູ (ຄລຕ. 1:1) |
| ເພິ່ນໄດ້ຮັບເລືອກຕອນໃດ? | ຕັ້ງແຕ່ໃນທ້ອງຂອງແມ່ລາວ (ຄລຕ. 1:15) |
| ເພິ່ນໄດ້ຮັບການເອີ້ນຕອນໃດ? | ເທິງຖະໜົນຕອນເດີນທາງໄປເມືອງ ດາມັສກັດ (ກຈກ 22:6-7) |
| ເພິ່ນເປັນສາວົກປະກາດຂ່າວໃຫ້ໃຜ? | ປະກາດກັບຊົນຊາດຕ່າງໆ (ຄລຕ. 2:9) |





ນັບຕັ້ງແຕ່ໄດ້ຊົງຮັບການຮຽກເອີ້ນ ຊີວິດຂອງເພິ່ນກໍ່ມຸ່ງເນັ້ນໄປທີ່ພຣະເຢຊູ ເພິ່ນຄິດເຖິງພຣະເຢຊູ, ເວົ້າເຖິງພຣະເຢຊູ ແລະ ແບ່ງປັນເລື່ອງລາວໃຫ້ກັບທຸກຄົນ

ດ້ວຍເຫດນີ້, ຕັ້ງແຕ່ວິນາທີທຳອິດທີ່ເພິ່ນເດີນທາງມາຮອດເມືອງໂກຣິນໂທ ຂ່າວທີ່ເພິ່ນປະກາດນັ້ນ ກໍ່ແມ່ນເລື່ອງຂອງພຣະເຢຊູ(1 ກຣທ 2:2).

# ການເດີນທາງສູ່ເມືອງໂກຣິນໂທ

“ຫລັງຈາກນັ້ນໂປໂລໄດ້ອອກຈາກນະຄອນອາແຖນ ແລະ ໄປທີ່ເມືອງໂກຣິນໂທ” (ກຈກ 18:1)



ໃນການເດີນທາງໄປປະກາດຄັ້ງທີສອງ, ອຈ ໂປໂລໄດ້ຮັບການດົນໃຈຈາກພຣະວິນຍານບໍຣິສຸດໃຫ້ໄປທະວີບຢູໂຣບ (ກຈກ 16:6-10). ເພິ່ນໄດ້ຖືກໄລ່ອອກຈາກເມືອງຟີລິບປອຍ(ກຈກ 16:12, 38-39), ຈາກເມືອງເທສະໂລນິກ (ກຈກ 17:1, 5, 9-10), ແລະ ຈາກເມືອງ ເບເຣຍ (ກຈກ 17:13-14).



ໃນເມືອງອາແຖນ, ຫລັງຈາກໄດ້ເທດສະໜາໃຫ້ແກ່ຊາວຢິວໃນທຳມະສາລາ ແລະ ແກ່ຄົນຕ່າງຊາດໃນຕະຫລາດແລ້ວ, ເພິ່ນໄດ້ຮັບເຊີນໃຫ້ແບ່ງປັນທີສະພາ ອາເລໂອປາໂຂ (ກຈກ 17:16-21). ຫລັງຈາກເທດສະໜາແລ້ວມີບໍ່ຫລາຍຄົນທີ່ຮັບເຊື່ອໃນພຣະເຢຊູ (ກຈ 17:34).



ຫລັງຈາກອອກຈາກເມືອງ ອາແຖນ, ອຈ ໂປໂລ ກໍ່ໄດ້ໄປທີ່ເມືອງໂກຣິນໂທ ແລະ ໄປອາໄສຢູ່ກັບ ທ.ອາກີລາ ແລະ ນ.ປີຊະກີລາ (ກຈກ 18:1-3).



ຕາມທຳນຽມຂອງລາວແລ້ວ ລາວຈະເລີ່ມເທດສະໜາໃຫ້ແກ່ຊາວຢິວໃນທຳມະສາລາກ່ອນ ແລ້ວຈຶ່ງເທດສະໜາໃຫ້ແກ່ຄົນຕ່າງຊາດ (ກຈກ 18:4-8). ໃນຂະນະທີ່ເພິ່ນພັກຢູ່ເມືອງໂກຣິນໂທ ແລະ ຫລັງຈາກທີ່ເພິ່ນໄດ້ຮັບຄວາມຜິດຫວັງ ໃນເມືອງອາແຖນ, ເພິ່ນຈຶ່ງຕັດສິນໃຈທີ່ຈະບໍ່ໃຊ້ສະຕິປັນຍາຂອງມະນຸດ ແຕ່ຈະເທດສະໜາສະເພາະເລື່ອງຂອງພຣະເຢຊູຜູ້ທີ່ຖືກຕຶງທີ່ໄມ້ກາງແຂນເທົ່ານັ້ນ” (1 ກຣທ 2:2).

# ຕົວເມືອງໂກຣິນໂທ

"ເຖິງແມ່ນວ່າມີພາລະຫລາຍໃນສະຫວັນ ແລະ ເທິງແຜ່ນດິນໂລກກໍດີ ທີ່ເຂົາເອີ້ນວ່າ ພຣະເຈົ້າ' " (1 ກຣທ 8:5b )



ເມືອງໂກຣິນໂທຖືກທຳລາຍໂດຍຊາວໂຣມັນ ໃນປີ 146 BC. ຫລັງຈາກນັ້ນ, ຈູລຽດ ຊີຊາ (Julius Caesar) ໄດ້ສົ່ງທະຫານ ແລະ ຊະເລີຍເຂົ້າມາຕັ້ງຖິ່ນຖານໃນປີ 46 BC. ໃນທີ່ສຸດ, ເມືອງໄດ້ຖືກກູ້ຄືນໃນປີ 44 BC. ເຊິ່ງເປັນຊ່ວງເວລາ ທີ່ອຈ ໂປໂລໄດ້ໄປຢ້ຽມຢາມ, ແລະ ເມືອງໂກຣິນໂທ ໄດ້ກາຍເປັນສູນກາງການຄ້າທີ່ສຳຄັນ



ຄວາມສຳຄັນຂອງເມືອງໂກຣິນໂທ ແມ່ນຕັ້ງຢູ່ໃນທີ່ຕັ້ງທີ່ດີ, ເຊິ່ງມີທ່າເຮືອການຄ້າທີ່ສຳຄັນສອງແຫ່ງຄື: ເລຄຽມ Lechaeum ທີ່ຢູ່ອ່າວໂກຣິນໂທGulf of Corinth; ແລະ ເຊນເຊຍ Cenchreae, ທີ່ຢູ່ອ່າວຊາໂຣນິກ Saronic Gulf.

ການເຮັດທຸລະກິດ ເຮັດໃຫ້ ອຈ ໂປໂລ ສາມາເຮັດວຽກງານໂດຍເປັນຊ່າງເຮັດເຕັ້ນໄດ້, ແຕ່ຄວາມໝັ້ນຄົງຂອງຊາວໂກຣິນໂທ (ເຊິ່ງທຽບເທົ່າກັບເມືອງອາແຖນ) ກໍມີຂໍ້ເສຍຫລາຍໆປະການ.



ການບູຊາຮູບເຄົາຣົບ ແລະການຜິດສິນທຳທາງເພດ ໄດ້ແຜ່ຫລາຍອອກໄປທົ່ວເມືອງ ແລະ ແຊກຊຶມຢູ່ໃນວັດທະນະທຳຂອງເມືອງ, ຂ່າວສ່ວນໃຫຍ່ຂອງ ອຈ ໂປໂລ ທີ່ສົ່ງເຖິງຊາວເມືອງໂກຣິນໂທນັ້ນ ແມ່ນພະຍາຍາມກຳຈັດບັນຫາທີ່ກຳລັງແຜ່ລາມເຂົ້າມາໃນຄຣິດຕະຈັກ.



# ຊາວເມືອງໂກຣິນໂທ

“ມີຄືນໜຶ່ງໂປໂລ ໄດ້ເຫັນນິມິດ ແລະ ໃນນິມິດນັ້ນອົງພຣະຜູ້ເປັນເຈົ້າໄດ້ກ່າວແກ່ເພິ່ນວ່າ ຢ່າສູ່ຢ້ານຄົນເຫລົ່ານີ້ ແຕ່ຈົ່ງກ່າວແກ່ພວກເຂົາຕໍ່ໄປບໍ່ຕ້ອງຢຸດ” (ກຈກ 18:9)



ຊາວຢິວໃນເມືອງໂກຣິນໂທ ປະຕິເສດຂ່າວດີນັ້ນ ເຮັດໃຫ້ ອຈ ໂປໂລ ຕ້ອງອອກຈາກທຳມະສາລາ ແລະ ເລີ່ມປະຊຸມກັບຄົນຕ່າງຊາດຢູ່ໃນເຮືອນຫລັງໜຶ່ງທີ່ຢູ່ຕິດກັບທຳມະສາລາ (ກຈກ 18:4-7).



“ຄວາມເສື່ອມຊາມທາງສິນລະທຳທີ່ເພິ່ນໄດ້ພົບເຫັນໃນທ່າມກາງຄົນຕ່າງຊາດ, ປະກອບກັບການດູຖູກຢຽດຢາມແລະການໝິ່ນປະໝາດທີ່ເພິ່ນໄດ້ຮັບຈາກພວກຢິວ, ໄດ້ສ້າງຄວາມທຸກທໍລະມານໃຈຢ່າງຍິ່ງໃຫ້ແກ່ຈິດວິນຍານຂອງເພິ່ນ. ເພິ່ນເຖິງຂັ້ນເກີດຄວາມສົງໄສໃນສະຕິປັນຍາຂອງການພະຍາຍາມທີ່ຈະສ້າງຄຣິດຕະຈັກຂຶ້ນມາຈາກກຸ່ມຄົນ ທີ່ເພິ່ນໄດ້ພົບເຫັນຢູ່ສະຖານທີ່ແຫ່ງນັ້ນ.”
(EGW The Acts of the Apostle p. 250).



ໃນຂະນະນັ້ນພຣະເຢຊູໄດ້ຊົງປາກົດໃນນິມິດຕອນກາງຄືນ ເພື່ອໃຫ້ກຳລັງໃຈ ອຈ ໂປໂລ ເພື່ອໃຫ້ເພິ່ນໄດ້ສືບຕໍ່ເຮັດວຽກຕໍ່ໄປໃນທ່າມກາງຊາວໂກຣິນໂທ. ໂດຍຊົງຮັບຮອງກັບເພິ່ນວ່າ ຈະມີຄົນຈຳນວນລຫາຍທີ່ຈະຮັບຟັງຂ່າວປະເສີດນັ້ນ(ກຈກ 18:9-10).



ໂດຍກຳລັງໃຈຈາກນິມິດນີ້ ອຈ ໂປໂລ ຈຶ່ງຢູ່ໃນເມືອງໂກຣິນໂທຕໍ່ໄປເປັນເວລາໜຶ່ງປີເຄິ່ງ (ກຈກ 18:12-13). ຕອນທີ່ລາວໄດ້ອອກຈາກເມືອງໂກຣິນໂທ ຄຣິດຕະຈັກຂະໜາດໃຫຍ່ກໍ່ໄດ້ກໍ່ຕັ້ງຂຶ້ນແລ້ວ (ກຈກ 18:18).

# ຈົດໝາຍເຖິງຊາວເມືອງໂກຣິນໂທ

"ພີ່ນ້ອງທັງຫລາຍເອີຍ, ເພາະມີບາງຄົນຈາກກຸ່ມຂອງນາງຂະໂລເອ ໄດ້ເລົ່າໃຫ້ຟັງວ່າ, ໄດ້ເກີດ
ມີການຜິດຂ້ອງຕ້ອງຖຽງກັນໃນທ່າມກາງພວກເຈົ້າ" (1 ກຣທ 1:11)

## 1 ກຣທ 1-6

ເມື່ອນາງ ຂະໂລເອ ໄດ້ແຈ້ງໃຫ້ ອຈ ໂປໂລຮັບຮູ້ເຖິງຫລາຍບັນຫາທີ່ໄດ້ເກີດຂຶ້ນໃນຄຣິດຕະຈັກ, ອຈ ໂປໂລ ຈຶ່ງຕັກເຕືອນພວກເຂົາກ່ຽວກັບເລື່ອງຕ່າງໆ ເຊັ່ນ: ເລື່ອງການແຕກແຍກ, ການຜິດສິນທຳທາງເພດ, ການຜິດຖຽງ ແລະ ການຄ້າປະເວນີ

## 1 ກຣທ 7-16

ຄອບຄົວຂອງນາງຂະໂລເອ ຍັງໄດ້ນຳເອົາຈົດໝາຍສະບັບໜຶ່ງມາໃຫ້ ອຈ ໂປໂລ ເຊິ່ງມີຄຳຖາມຫລາຍຂໍ້ຈາກຄຣິດຕະຈັກກ່ຽວກັບຫົວຂໍ້ຕ່າງໆ ທີ່ອຈ ໂປໂລ ໄດ້ຕອບໄປເຊັ່ນ: ການແຕ່ງງານ, ການຢ່າຮ້າງ, ການຖວາຍອາຫານແກ່ຮູບເຄົາຣົບ, ການປະພຶດໃນການນະມັດສະການ, ການໃຊ້ຂອງປະທານຝ່າຍຈິດວິນຍານ ແລະ ການຟື້ນຄືນຊີບ

## 2 ກຣທ

ນີ້ແມ່ນຈົດໝາຍສະບັບທີສອງ ທີ່ໄດ້ຮັບການເກັບຮັກສາໄວ້, ເຖິງວ່າ ອຈ ໂປໂລ ຈະຂຽນຈົດໝາຍອີກຫລາຍສະບັບ (ອາດຈະເປັນຈົດກ່ອນໝາຍສອງສະບັບນີ້ທີ່ເຫລືອຢູ່ ຫລື ຢູ່ໃນຊ່ວງເວລານັ້ນ), ເພິ່ນຊື່ນຊົມຊາວໂກຣິນໂທທີ່ແກ້ໄຂບັນຫາບາງຢ່າງໄດ້, ແຕ່ເພິ່ນຍັງກະຕຸ້ນໃຫ້ພວກເຂົາພິຈາລະນາຝ່າຍໂລກຜ່ານທາງພຣະກິດຕິຄຸນຂອງພຣະຄຣິດ ເພື່ອຫລີກລ້ຽງອິດທິພົນຂອງວັດທະນະທຳອ້ອມຂ້າງ.









"ຜູ້ສົ່ງຂ່າວສານຂອງພຣະເຈົ້າໃນເມືອງໃຫຍ່ຕ່າງໆ ຈະຕ້ອງບໍ່ທໍ້ຖອຍໃຈຕໍ່ກັບຄວາມຊົ່ວຮ້າຍ, ຄວາມອະຍຸດຕິທຳ, ແລະ ຄວາມເສື່ອມຊາມ ທີ່ພວກເຂົາຖືກຮຽກຮ້ອງໃຫ້ຜະເຊີນ ໃນຂະນະທີ່ພະຍາຍາມປະກາດຂ່າວດີແຫ່ງຄວາມລອດ. ພຣະອົງເຈົ້າຊົງປາຖະໜາທີ່ຈະຊ່ວຍຊູໃຈຜູ້ຮັບໃຊ້ທຸກຄົນດ້ວຍຖ້ອຍຄຳດຽວກັນກັບທີ່ພຣະອົງໄດ້ມອບໃຫ້ແກ່ອັກຄະສາວົກໂປໂລ ໃນເມືອງໂກຣິນໂທທີ່ເຕັມໄປດ້ວຍຄວາມຊົ່ວຮ້າຍວ່າ: "ຢ່າຢ້ານເລີຍ, ແຕ່ຈົ່ງເວົ້າຕໍ່ໄປ ຢ່າມິດຢູ່: ເພາະວ່າເຮົາຢູ່ກັບເຈົ້າ ແລະຈະບໍ່ມີຜູ້ໃດເຮັດຮ້າຍເຈົ້າໄດ້: ເພາະວ່າເຮົາມີຄົນເປັນອັນມາກໃນເມືອງນີ້." (ກິດຈະການ 18:9,10)... [...] ໃນທຸກໆ ເມືອງພາຍໃຕ້ຄວາມແອອັດທີ່ເຕັມໄປດ້ວຍຄວາມຮຸນແຮງ ແລະ ອາດຊະຍາກຳນັ້ນ, ຍັງມີຫຼາຍຄົນ ທີ່ຫາກໄດ້ຮັບການສັ່ງສອນຢ່າງເໝາະສົມ ພວກເຂົາກໍຈະສາມາດຮຽນຮູ້ທີ່ຈະກາຍມາເປັນສາວົກຂອງພຣະເຢຊູໄດ້. ດ້ວຍວິທີນີ້, ຄົນເປັນພັນໆຈະສາມາດເຂົ້າເຖິງຄວາມຈິງອັນນຳໄປສູ່ຄວາມລອດ ແລະ ຖືກນຳພາໃຫ້ຕ້ອນຮັບພຣະຄຣິດເປັນພຣະຜູ້ຊ່ວຍໃຫ້ລອດສ່ວນຕົວຂອງພວກເຂົາ."

**EGW (Prophets and Kings, p. 277)**